

2023

ບົດລາຍງານ ປະຈຳປີ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ)

+856 30 9882809
ບ້ານໜອງຄັນຄູ
ເມືອງນາຊາຍທອງ, ນອຄອນຫຼວງວຽງຈັນ
ສປປ.ລາວ.

ສາລະບານ

ຄຳເຫັນຂອງຜູ້ບໍລິຫານ

ພາກທີ I ຂໍ້ມູນທົ່ວໄປ 1

- ປະຫວັດຄວາມເປັນມາ 2
- ວິໃສທັດ 4
- ພາລະກິດ 5
- ໂຄງຮ່າງການຈັດຕັ້ງ ແລະ ການບໍລິຫານ 5
- ຈຳນວນພະນັກງານ 5
- ສະຖານທີ່ຕັ້ງ 5

ພາກທີ II ລາຍງານຜົນການດຳເນີນງານ

- ລາຍງານ ລາຍຮັບ - ລາຍຈ່າຍ ປະຈຳປີ 2023
- ລາຍງານ ຊັບສິນ ແລະ ສ່ວນຂອງຜູ້ຖືຫຸ້ນ ປະຈຳປີ 2023
- ອັດຕາສ່ວນທາງການເງິນ ປະຈຳປີ 20223

ພາກທີ III ຂໍ້ມູນກ່ຽວກັບຊັບສິນ ແລະ ໂຄງສ້າງຜູ້ຖືຫຸ້ນ

- ຂໍ້ມູນກ່ຽວກັບຊັບສິນ
- ໂຄງສ້າງຜູ້ຖືຫຸ້ນ

ພາກທີ IV ສະພາບໍລິຫານ ແລະ ຄະນະກຳມະການ

- ໂຄງສ້າງຂອງສະມາຊິກສະພາບໍລິຫານ
- ປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ

ພາກທີ V ລາຍງານການກວດສອບຂອງບໍລິສັດກວດສອບພາຍນອກ(ພ້ອມເອກະສານຄັດຕິດ)

- ບົດລາຍງານຂອງຜູ້ກວດສອບພາຍນອກ
- ໃບລາຍງານຖານະການເງິນ
- ໃບລາຍງານຜົນການດຳເນີນງານ
- ໃບລາຍງານສ່ວນປ່ຽນແປງຂອງທຶນ
- ໃບລາຍງານກະແສເງິນສົດ
- ບົດອະທິບາຍຊ້ອນທ້າຍລາຍງານການເງິນ

ພາກທີ VI ລາຍການອັດຕາຄ່າບໍລິການຂອງບໍລິສັດກວດສອບພາຍນອກ

ພາກທີ VII ແຜນດຳເນີນທຸລະກິດ ປະຈຳປີ 2024

ຄວາມເຫັນຂອງຜູ້ບໍລິຫານ

ໃນປີ 2023 ທີ່ຜ່ານມາ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ດຳເນີນການຕາມພາລະກິດຂອງບໍລິສັດ ໄດ້ຢ່າງລຸລ່ວງ ໂດຍບໍລິສັດໄດ້ທຳການຈັດຊື້ຈັດຈ້າງ ປັບປຸງເຄື່ອງຈັກ, ອຸປະກອນ, ເຄື່ອງມື ການນຳໃຊ້ເທັກໂນໂລຍີລວມເຖິງການພັດທະນາບຸກຄະລາກອນ ທີ່ມີຄວາມຈຳເປັນໃນການດຳເນີນທຸລະກິດ ເພື່ອໃຫ້ການທຳງານມີປະສິດທິຜົນສູງສຸດ.

ບົດລາຍງານປະຈຳປີ 2023 ນີ້ໄດ້ແບ່ງອອກເປັນ 7 ພາກສ່ວນ ດັ່ງຕໍ່ໄປນີ້:

ພາກທີ I **ຂໍ້ມູນທົ່ວໄປຂອງບໍລິສັດ**
ລາຍງານກ່ຽວກັບປະຫວັດຄວາມເປັນມາ, ວິໃສທັດ, ພາລະກິດ, ບຸກຄະລາກອນ ແລະ ສະຖານ ທີ່ຕັ້ງບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພາກທີ II **ລາຍງານຜົນການດຳເນີນທຸລະກິດ**
ລາຍງານກ່ຽວກັບຜົນການດຳເນີນທຸລະກິດ ປະຈຳປີ 2023 ສະຫຼຸບຂໍ້ມູນໂດຍຫຍໍ້ກ່ຽວກັບຂໍ້ມູນທາງການເງິນທີ່ສຳຄັນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພາກທີ III **ຂໍ້ມູນກ່ຽວກັບຊັບສິນ ແລະ ໂຄງສ້າງຜູ້ຖືຫຸ້ນ**
ລາຍງານກ່ຽວກັບຂໍ້ມູນຊັບສິນ ແລະ ໂຄງສ້າງຜູ້ຖືຫຸ້ນ, ທຶນຈົດທະບຽນທັງໝົດສັດສ່ວນຜູ້ຖືຫຸ້ນ ແລະ ສັດສ່ວນຫຸ້ນທີ່ອອກຈຳໜ່າຍໃຫ້ແກ່ປະຊາຊົນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພາກທີ IV **ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການ**
ລາຍງານກ່ຽວກັບໂຄງສ້າງສະພາບໍລິຫານ ແລະ ປະຫວັດຂອງສະມາຊິກໃນສະພາບໍລິຫານ ຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ໃນປີ 2023 ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພາກທີ V **ລາຍງານການກວດສອບຂອງບໍລິສັດກວດສອບພາຍນອກ(ພ້ອມເອກະສານຄັດຕິດ)**
ລາຍງານກ່ຽວກັບໜ້າທີຮັບຜິດຊອບຂອງຜູ້ບໍລິຫານຕໍ່ຂໍ້ມູນທາງບັນຊີ, ຄຳຄິດເຫັນຂອງຜູ້ກວດສອບຕໍ່ງົບການເງິນ, ລາຍງານຄວາມເປັນອິດສະຫຼະຂອງຜູ້ກວດສອບ ແລະ ອື່ນໆ ກ່ຽວກັບລາຍງານການກວດສອບບົດລາຍງານການເງິນ ປະຈຳປີ 2023

ພາກທີ VI **ລານງານອັດຕາຄ່າບໍລິການຂອງບໍລິສັດກວດສອບບັນຊີ**
ລາຍງານກ່ຽວກັບອັດຕາຄ່າບໍລິການທີ່ບໍລິສັດ ລາວອາໂກຣເທັກ ມະຫາຊົນ ຈາກການກວດສອບບັນຊີ ປະຈຳປີ 2024

ພາກທີ VII **ແຜນດຳເນີນທຸລະກິດ ປະຈຳປີ 2024**

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ)

ພາກທີ I ຂໍ້ມູນທົ່ວໄປກ່ຽວກັບບໍລິສັດ

ປະຫວັດຄວາມເປັນມາ : ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ" ຫຼື "ລອທ") ໄດ້ສ້າງຕັ້ງຂຶ້ນໃນ ວັນທີ 29 ກໍລະກົດ 2008, ອີງຕາມໃບອະນຸຍາດລົງທຶນພາຍໃນ ສະບັບເລກທີ 077/ຄລທ.ນວ ໃນຮູບແບບບໍລິສັດ ຈຳກັດຜູ້ດຽວ ໂດຍມີນັກທຸລະກິດຄົນລາວຖືຮຸ້ນ 100 ສ່ວນຮ້ອຍ ດ້ວຍທຶນຈົດທະບຽນ 100,000 (ໜຶ່ງແສນ) ໂດ ລາສະຫະລັດ, ດຳເນີນທຸລະກິດໃຫ້ບໍລິການທີ່ປຶກສາດ້ານກະສິກຳແບບຄົບວົງຈອນຊຶ່ງຄອບຄຸມນັບຕັ້ງແຕ່ການສ້າງ ຟາມ, ການກ້າເບ້ຍ ແລະ ການປູກ.

ວັນທີ 04 ພຶດສະພາ 2012 ບໍລິສັດໄດ້ເພີ່ມທຶນຈົດທະບຽນມາເປັນ 5,000,000,000 (ຫ້າຕື້) ກີບ ໂດຍ ໄດ້ຮັບອະນຸຍາດດຳເນີນທຸລະກິດເພີ່ມເຕີມຄື: ປະເພດອຸດສະຫະກຳປຸງແຕ່ງຜະລິດນ້ຳມັນປາມຄົບວົງຈອນ ເປັນຕົ້ນ ແມ່ນການສ້າງໂຮງງານແປຮູບຜົນຜະລິດຈາກຕົ້ນປາມນ້ຳມັນ, ໂຮງງານຝຸ່ນຊີວະພາບ, ໂຮງງານຜະລິດນ້ຳມັນກະ ຊວນຊີວະພາບ, ໂຮງງານອັດຮ່າຍນ້ຳມັນພືດ ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ 0932/ຈທອ.
ວັນທີ 28 ສິງຫາ 2013 ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນມາເປັນ 40,000,000,000 (ສີ່ສິບຕື້) ກີບ ແລະ ຫັນປ່ຽນຮູບແບບບໍລິສັດຈາກບໍລິສັດຈຳກັດຜູ້ດຽວມາເປັນຮູບແບບບໍລິສັດຈຳກັດ, ເຊິ່ງໄດ້ຮັບອະນຸຍາດດຳເນີນທຸ ລະກິດເພີ່ມເຕີມຄື: ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍແນວພັນພືດ, ເບ້ຍໄມ້ກະສິກຳ ແລະ ຜົນຜະລິດກະສິກຳທຸກ ຊະນິດ, ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍສະບຽງອາຫານ ແລະ ເຄື່ອງດື່ມ, ນຳເຂົ້າວັດສະດຸກໍ່ສ້າງກຽວກັບການ ສ້າງຕັ້ງໂຮງງານອຸດສະຫະກຳ ແລະ ກະສິກຳ, ເຄື່ອງຈັກອື່ນໆທີ່ກ່ຽວຂ້ອງກັບ Biodiesel ເພື່ອຮັບໃຊ້ໂຮງງານ, ຝຸ່ນ ເຄມີ ແລະ ຫົວເຊື້ອເພື່ອນຳໃຊ້ເປັນສ່ວນປະກອບຜະລິດຝຸ່ນຊີວະພາບ. ໃນໄລຍະດັ່ງກ່າວ, ທຸລະກິດປາມເລີ່ມເປັນ ທີ່ຮັບຮູ້ ແລະ ມີການຕອບຮັບເປັນຢ່າງດີໃນໂຄງການປູກປາມຂອງບໍລິສັດທີ່ສົ່ງເສີມປະຊາຊົນຊຶ່ງມີເນື້ອທີ່ປູກສອນ ປາມກ່ວາ 120 (ໜຶ່ງຮ້ອຍຊາວ) ເຮັກຕ້າ ທີ່ບ້ານແອກຊ້າງ, ເມືອງໂພນໂຮງ, ແຂວງວຽງຈັນ.

ວັນທີ 12 ພະຈິກ 2014 ບໍລິສັດໄດ້ມີການປ່ຽນແປງສັດສ່ວນການຖືຮຸ້ນໃໝ່ ໂດຍທີ່ມີການຖືຄອງຮຸ້ນ ຈາກນັກທຸລະກິດລາວຄື: ທ່ານ ບຸນມາ ຈັນທະວົງ ຈຳນວນ 10 (ສິບ) ສ່ວນຮ້ອຍ, ທ່ານ ອຸດົມ ແກ້ວທະວົງ ຈຳນວນ 5 (ຫ້າ) ສ່ວນຮ້ອຍ ແລະ ນັກທຸລະກິດໄທ: ທ່ານ ເສດ ພັດທະນາມາດ ຈຳນວນ 85 (ແປດສິບຫ້າ) ສ່ວນ ຮ້ອຍ. ໃນໄລຍະນີ້ບໍລິສັດໄດ້ມີໂຄງການ 2+3 ປູກປາມນ້ຳມັນ ທີ່ເມືອງໄຊຍະບູລີ ແລະ ໄດ້ພັດທະນາຕົ້ນປາມສາຍ ພັນທີ່ເໝາະສົມກັບພື້ນທີ່ ສປປ ລາວ ເປັນຊຸດທີ່ສອງ.

ບໍລິສັດໄດ້ຫັນປ່ຽນຮູບແບບເປັນ ບໍລິສັດ ມະຫາຊົນ, ໂດຍບໍລິສັດໄດ້ຮັບການ ສ້າງຕັ້ງຂຶ້ນໃນວັນທີ 17 ພຶດສະພາ ປີ 2017 ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ 0424/ຈທອ ພາຍໃຕ້ກົດໝາຍ ຂອງ ສປປ ລາວ (ເຊິ່ງຕໍ່ໄປນີ້ ເອີ້ນວ່າ "ວັນທີປ່ຽນຮູບແບບບໍລິສັດ) ໂດຍມີ ສຳນັກງານໃຫຍ່ຕັ້ງຢູ່: ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ. ໃນວັນທີປ່ຽນຮູບແບບ ບໍລິສັດ ມີທຶນຈົດທະບຽນຢູ່ທີ່ 40,000,000,000 ກີບ (ສີ່ສິບຕື້) ກີບ ບໍລິສັດໄດ້ຮັບອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າສາມາດ ດຳເນີນທຸລະກິດໃນການນຳເຂົ້າຫົວເຊື້ອນ້ຳມັນເຊື້ອໄຟ ແລະ ບໍລິການຂາຍຍົກ-ຂາຍຍ່ອຍ ນ້ຳມັນເຊື້ອໄຟຊີວະພາບ ແລະ ໃຫ້ນຳເຂົ້ານ້ຳມັນກາຊວນເທົ່ານັ້ນເພື່ອມາຜະລິດເປັນ ນ້ຳມັນເຊື້ອໄຟຊີວະພາບ.

ເວົ້າລວມແລ້ວ, ບໍລິສັດລາວອາໂກຣເທັກແມ່ນບໍລິສັດທີ່ດຳເນີນທຸລະກິດທາງດ້ານອຸດສາຫະກຳການກະເສດແປຮູບແບບຄົບວົງຈອນ ໂດຍສຸມໃສ່ພືດທີ່ໃຫ້ນ້ຳມັນ ເຊິ່ງສາມາດແປຮູບໃຫ້ເປັນອາຫານ ແລະ ພະລັງງານໄດ້. ພືດນ້ຳມັນທີ່ບໍລິສັດໄດ້ພັດທະນາໃຫ້ເປັນທຸລະກິດຫຼັກໄດ້ແກ່: ນ້ຳມັນປາມ ທຸລະກິດກ່ຽວພັນກັບປາມນ້ຳມັນທີ່ສາມາດສ້າງລາຍຮັບໃຫ້ກັບບໍລິສັດປະກອບມີ:

1. ທຸລະກິດຜະລິດ ແລະ ຈຳໜ່າຍເມັດພັນປາມ ແລະ ຕົ້ນກ້າປາມ.




2. ທຸລະກິດໃຫ້ການບໍລິການປູກ, ດູແລ, ແລະ ເປັນທີ່ປຶກສາໃນການບໍລິຫານຈັດການສວນປາມ.





3. ທຸລະກິດຜະລິດ ແລະ ຈຳໜ່າຍນ້ຳມັນປາມດິບ.





4. ທຸລະກິດຜະລິດ, ນຳເຂົ້າ ແລະ ຈຳໜ່າຍນ້ຳມັນກາຊວນຊີວະພາບ.






ວິໄສທັດ : ເປັນຜູ້ນຳດ້ານອຸດສາຫະກຳປາມນ້ຳມັນຄົບວົງຈອນໃນ ສ ປປ ລາວ ເພື່ອ ຜະລິດເປັນພະລັງງານ ແລະ ອາຫານແບບຍືນຍົງ.



ພາລະກິດ :

1. ສະໜອງແນວພັນປາມນ້ຳມັນທີ່ດີ ມີຄຸນນະພາບ ໃຫ້ກັບກະເສດຕະກອນ.
2. ສົ່ງເສີມໃຫ້ປະຊາຊົນທີ່ມີສ່ວນຮ່ວມໃນການປູກປາມນ້ຳມັນເພື່ອໃຫ້ມີລາຍໄດ້ທີ່ໝັ້ນຄົງ.
3. ຜະລິດ ແລະ ສະໜອງນ້ຳມັນເຊື້ອໄຟຊີວະພາບທີ່ເປັນພະລັງທົດແທນ ໃຫ້ໄດ້ຄຸນນະພາບຕາມມາດຕະຖານເພື່ອສະໜອງໃຫ້ຜູ້ຊົມໃຊ້.
4. ຮັກສາຜົນປະໂຫຍດຕໍ່ຜູ້ຖືຮຸ້ນ ທີ່ມີສ່ວນໄດ້ສ່ວນເສຍ ໃຫ້ໄດ້ຮັບຜົນຕອບແທນສູງສຸດ.

ໂຄງຮ່າງການຈັດຕັ້ງ ແລະການບໍລິຫານ :



ຈຳນວນຄົນ : ຂອງ ລອທ ທັງໝົດ 38 ຄົນ, ໃນນີ້ຍິງ 12 ຄົນ

ສຳນັກງານໃຫຍ່ສວນໜອງຄັນຄູ	ຈຳນວນ	28	ຄົນ
ສວນແກ້ວອຸດົມ	ຈຳນວນ	7	ຄົນ
ສວນຊະນະຄາມ	ຈຳນວນ	2	ຄົນ
ສວນສາລະວັນ	ຈຳນວນ	1	ຄົນ

ສະຖານທີ່ຕັ້ງສຳນັກງານແລະໂຮງງານ: ບ້ານໜອງຄັນຄູ ເມືອງນາຊາຍທອງ ແຂວງນະຄອນຫຼວງວຽງຈັນ, ສປປ ລາວ ໂທລະສັບ 030-988-2809


ພາກທີ II ລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2023

ໃນປີ 2023, ລາຄານ້ຳມັນປາມດິບຈະເພີ່ມຂຶ້ນ. ແນວໃດກໍດີ, ໃນໄລຍະດຽວກັນໄດ້ເກີດໄພແຫ້ງແລ້ງ, ເຮັດໃຫ້ສວນປາມຜະລິດຕະພັນຕົ້ນປາມຫຼຸດລົງຫຼາຍກວ່າ 60% ຂອງການຜະລິດປົກກະຕິ. ດັ່ງນັ້ນ, ຜົນຜະລິດຈາກກິດຈະກຳຕົ້ນຕໍຂອງບໍລິສັດຕາມແຜນທຸລະກິດແມ່ນໄດ້ຮັບຜົນກະທົບຢ່າງຫຼວງຫຼາຍ. ດັ່ງນັ້ນ, ຈາກປັດໃຈທີ່ບໍ່ສາມາດຄວບຄຸມໄດ້ນີ້ ດັ່ງນັ້ນ, ບໍລິສັດຕ້ອງປັບຍຸດທະສາດການດຳເນີນທຸລະກິດໃນປີ 2023 ເພື່ອສະທ້ອນໃຫ້ເຫັນສະຖານະການໃນເວລານັ້ນ ເຊິ່ງລາຍງານດັ່ງນີ້


ລາຍງານ ລາຍຮັບ - ລາຍຈ່າຍ ປະຈຳປີ 2023

ໜ່ວຍ : ລ້ານກີບ

ລາຍການ	2023	2022	ຈຳນວນ ເພີ່ມ (ຫລຸດ)	ອັດຕາສ່ວນ ເພີ່ມ (ຫລຸດ)
ລາຍຮັບຈາກການຂາຍ ແລະການບໍລິການ	38,873.00	21,163	17,710	84%
ຕົ້ນທຶນຂອງການຂາຍ	(33,683.00)	(12,736)	20,947	164%
ກຳໄລລວມ	5,190.00	8,426	(3,236)	(38%)
ຄ່າໃຊ້ຈ່າຍໃນການຂາຍແລະບໍລິຫານ	(12,427.00)	(8,421)	4,006	40%
ລາຍໄດ້ອື່ນໆ	1,684.00	2,164	(480)	(22%)
ໄດ້ຮັບ/(ຂາດທຶນ) ຈາກອັດຕາແລກປ່ຽນ	(3,971.00)	(1,337)	2,634	197%
ກຳໄລ/(ຂາດທຶນ) ຈາກການດຳເນີນງານ	(9,524.00)	823	(10,356)	(1,245%)
ລາຍຈ່າຍທາງດ້ານການເງິນ	(215.00)	(358)	(143)	(40%)
ກຳໄລ/(ຂາດທຶນ) ກ່ອນພາສີລາຍໄດ້	(9,739.00)	474	(10,213)	(2,155%)
ອາກອນກຳໄລ	0.00	(224)	(224)	(100%)
ກຳໄລ/(ຂາດທຶນ) ສຸດທິສຳລັບງວດ	(9,739.00)	250	(9,989)	(3,996%)



ບໍລິສັດ ມີລາຍຮັບຈາກການຂາຍ ແລະ ການບໍລິການໃນປີ 2022 ເປັນຈຳນວນເງິນ 21,163 ລ້ານກີບ ແລະ ໃນປີ 2023 ເປັນຈຳນວນເງິນ 38,873 ລ້ານກີບ ຊຶ່ງມີລາຍຮັບຈາກການຂາຍ ແລະ ການບໍລິການ ເພີ່ມຂຶ້ນໃນປີ 2023 ເປັນຈຳນວນເງິນ 17,710 ລ້ານກີບ ຄິດເປັນອັດຕາສ່ວນ 84%, ບໍລິສັດມີຕົ້ນທຶນຈາກການຂາຍໃນປີ 2022 ເປັນຈຳນວນເງິນ 12,736 ລ້ານກີບ ແລະ ໃນປີ 2023 ເປັນຈຳນວນເງິນ 33,683 ລ້ານກີບ, ຊຶ່ງມີຕົ້ນທຶນຈາກການຂາຍເພີ່ມຂຶ້ນໃນປີ 2023 ເປັນຈຳນວນເງິນ 20,947 ລ້ານກີບ ຄິດເປັນອັດຕາສ່ວນ 164%, ສິ່ງຜົນໃຫ້ບໍລິສັດ ມີກຳໄລຂັ້ນຕົ້ນຫຼຸດລົງໃນປີ 2023 ເປັນຈຳນວນເງິນ 3,236 ລ້ານກີບ ຄິດເປັນອັດຕາສ່ວນ 38%



ບໍລິສັດ ມີຄ່າໃຊ້ຈ່າຍໃນ ການຂາຍ ແລະ ບໍລິຫານໃນປີ 2022 ເປັນຈຳນວນ ເງິນ 8,421 ລ້ານ ກີບ ແລະ ໃນປີ 2023 ເປັນຈຳນວນ ເງິນ 12,427 ລ້ານ ກີບ ຊຶ່ງບໍລິສັດມີຄ່າ ໃຊ້ຈ່າຍໃນການ ຂາຍ ແລະ ການບໍລິຫານເພີ່ມຂຶ້ນໃນປີ 2023 ເປັນຈຳນວນເງິນ 4,006 ລ້ານກີບ ຄິດເປັນອັດຕາສ່ວນ 48% ບໍລິສັດມີລາຍໄດ້ອື່ນໆ ໃນປີ 2022 ເປັນຈຳນວນເງິນ 2,164 ລ້ານກີບ ແລະ ໃນປີ 2023 ເປັນຈຳນວນເງິນ 1,684 ລ້ານກີບ ຊຶ່ງບໍລິສັດມີລາຍໄດ້ອື່ນໆຫຼຸດລົງໃນປີ 2023 ເປັນຈຳນວນເງິນ 480 ລ້ານກີບ ຄິດເປັນອັດຕາສ່ວນ 22%, ບໍລິສັດຂາດທຶນຈາກອັດຕາແລກປ່ຽນໃນປີ 2022 ຈຳນວນເງິນ 1,337 ລ້ານກີບ ແລະ ໃນປີ 2023 ຈຳນວນເງິນ 3,971 ລ້ານກີບ ຊຶ່ງບໍລິສັດ ຂາດທຶນຈາກອັດຕາແລກປ່ຽນເພີ່ມຂຶ້ນໃນປີ 2023 ເປັນຈຳນວນເງິນ 2,634 ລ້ານກີບ ຄິດເປັນອັດຕາສ່ວນ 197% ສິ່ງຜົນໃຫ້ບໍລິສັດ ມີກຳໄລຈາກການດຳເນີນທຸລະກິດຫຼຸດລົງໃນປີ 2023 ເປັນຈຳນວນ ເງິນ 9,524 ລ້ານກີບ ຄິດເປັນອັດຕາສ່ວນ 1,245%




ບໍລິສັດມີລາຍຈ່າຍ ທາງດ້ານການເງິນໃນປີ 2022 ເປັນຈຳນວນເງິນ 385 ລ້ານ ກີບ ແລະ ໃນປີ 2022 ເປັນ ຈຳນວນເງິນ 215 ລ້ານກີບ ຊຶ່ງ ບໍລິສັດ ມີລາຍຈ່າຍທາງດ້ານ ການເງິນຫຼຸດລົງໃນປີ 2023 ເປັນຈຳນວນເງິນ 143 ລ້ານ ກີບ ຄິດເປັນອັດຕາສ່ວນ 40%, ບໍລິສັດ ມີຈ່າຍອາກອນ ກຳໄລໃນປີ 2022 ເປັນຈຳນວນເງິນ 224 ລ້ານກີບ ແລະ ບໍ່ມີຈ່າຍອາກອນກຳໄລໃນປີ 2023 ຊຶ່ງບໍລິສັດມີ ອາກອນກຳໄລຫຼຸດລົງເປັນຈຳນວນເງິນ 224 ລ້ານກີບ ຄິດເປັນອັດຕາສ່ວນ 100% ສິ່ງຜົນໃຫ້ບໍລິສັດ ມີກຳໄລ ສຸດທິຫຼຸດລົງໃນປີ 2023 ເປັນຈຳນວນເງິນ 9,739 ລ້ານກີບ ຄິດເປັນອັດຕາສ່ວນ 3,996%

ຊັບສິນ ແລະ ສ່ວນຂອງຜູ້ຖືຫຸ້ນ


ໜ່ວຍ : ລ້ານກີບ

ລາຍການ	2023	2022	ຈຳນວນ ເພີ່ມ (ຫລຸດ)	ອັດຕາສ່ວນ ເພີ່ມ (ຫລຸດ)
ລວມຊັບສິນໝຸນວຽນ	32,441	21,569	10,872	50%
ລວມຊັບສິນບໍ່ໝຸນວຽນ	44,280	42,044	2,236	5%
ລວມຊັບສິນ	76,721	63,613	13,108	21%
ລວມໜີ້ສິນໝຸນວຽນ	13,884	9,242	4,642	50%
ລວມໜີ້ສິນໝຸນວຽນ	18,223	17.59	18,205	103,499%
ລວມໜີ້ສິນ	32,107	9,260	22,847	247%
ທຶນຈດທະບຽນ	50,000	50,000	0	-
ສ່ວນເພີ່ມທຶນ	3,269	3,269	0	-
ຄັງສະສົມຕາມກົດລະບຽບ	932	932	0	
ກຳໄລລໍຖ້າແບ່ງປັນ	-9,587	152	(9,739)	(6,407%)
ລວມສ່ວນຂອງຜູ່ຖືຫຸ້ນ	44,614	54,353	(9,739)	(18%)
ລວມໜີ້ສິນແລະສ່ວນຂອງຜູ່ຫຸ້ນ	76,721	63,613	13,108	21%




ບໍລິສັດ ມີຊັບສິນໝຸນວຽນລວມໃນປີ 2022 ເປັນຈຳນວນເງິນ 21,569 ລ້ານກີບ ແລະ ໃນປີ 2023 ເປັນຈຳນວນເງິນ 32,441 ລ້ານກີບ ຊຶ່ງບໍລິສັດມີຊັບສິນໝຸນວຽນເພີ່ມຂຶ້ນໃນປີ 2022 ເປັນຈຳນວນເງິນ 10,872 ລ້ານກີບ ຄິດເປັນອັດຕາສ່ວນ 50%, ບໍລິສັດ ມີຊັບສິນບໍ່ໝຸນວຽນລວມ ໃນ ປີ 2022 ເປັນຈຳນວນເງິນ 42,045 ລ້ານກີບ ແລະ ໃນປີ 2023 ເປັນຈຳນວນເງິນ 44,280 ລ້ານກີບ ຊຶ່ງບໍລິສັດມີຊັບສິນບໍ່ໝຸນວຽນເພີ່ມຂຶ້ນ ໃນປີ 2023 ເປັນຈຳນວນເງິນ 2,236 ລ້ານກີບ ຄິດເປັນອັດຕາສ່ວນ 5% ດັ່ງນັ້ນບໍລິສັດ ຈຶ່ງມີຊັບສິນລວມເພີ່ມຂຶ້ນ ໃນປີ 2023 ເປັນຈຳນວນເງິນ 13,108 ລ້ານກີບ ຄິດເປັນອັດຕາສ່ວນ 21%.

ບໍລິສັດມີໜີ້ສິນໝຸນວຽນລວມ ໃນປີ 2022 ເປັນຈຳນວນເງິນ 9,242 ລ້ານກີບ ແລະ ໃນປີ 2023 ເປັນຈຳນວນເງິນ 13,884 ລ້ານກີບ ຊຶ່ງ ບໍລິສັດ ມີໜີ້ສິນໝຸນວຽນລວມເພີ່ມຂຶ້ນເປັນຈຳ ນວນເງິນ 4,642 ລ້ານກີບ ຄິດເປັນອັດຕາສ່ວນ 50%, ບໍລິສັດມີໜີ້ສິນບໍ່ໝຸນວຽນລວມໃນປີ 2022 ເປັນຈຳນວນເງິນ 17.59 ລ້ານກີບ ແລະ ໃນປີ 2023 ເປັນຈຳນວນເງິນ 18,223 ລ້ານ ຊຶ່ງບໍລິສັດມີໜີ້ສິນບໍ່ໝຸນວຽນລວມເພີ່ມຂຶ້ນເປັນຈຳນວນເງິນ 18,205 ລ້ານກີບ ຄິດເປັນອັດຕາສ່ວນ 103,499%, ດັ່ງນັ້ນບໍລິສັດ ຈຶ່ງມີໜີ້ສິນລວມເພີ່ມຂຶ້ນໃນປີ 2023 ເປັນຈຳນວນເງິນ 22,847 ລ້ານກີບ ຄິດເປັນອັດຕາສ່ວນ 247%



ບໍລິສັດ ມີເງິນຄັງສະສົມຕາມກົດລະບຽບໃນປີ 2022 ເປັນຈຳນວນເງິນ 932 ລ້ານກີບ ແລະ ໃນປີ 2023 ເປັນຈຳນວນເງິນ 932 ລ້ານກີບ ຊຶ່ງບໍລິສັດມີເງິນຄັງສະສົມຕາມກົດລະບຽບ ຄືກັນກັບກ່ອນ, ບໍລິສັດ ມີກຳໄລ(ຂາດທຶນ)ສະສົມລໍຖ້າແບ່ງປັນໃນປີ 2022 ເປັນຈຳນວນເງິນ 152 ລ້ານກີບ ແລະ ໃນປີ 2023 ເປັນຈຳນວນເງິນ (9,578) ລ້ານກີບ ຊຶ່ງບໍລິສັດ ມີກຳໄລ(ຂາດທຶນ)ສະສົມລໍຖ້າແບ່ງປັນຫຼຸດລົງໃນປີ 2023 ເປັນຈຳນວນເງິນ (9,739) ລ້ານກີບ ຄິດເປັນອັດຕາສ່ວນ 6,407% ດັ່ງນັ້ນບໍລິສັດ ຈຶ່ງມີສ່ວນຂອງຜູ້ຖືຫຸ້ນຫຼຸດລົງໃນປີ 2023 ເປັນຈຳນວນເງິນ 13,108 ລ້ານກີບ ຄິດເປັນອັດຕາສ່ວນ 20%



ອັດຕາສ່ວນທາງການເງິນ


ລາຍການ	ໜ່ວຍ	2023	2022
ອັດຕາກຳໄລຂັ້ນຕົ້ນ	%	13.35	39.82
ອັດຕາກຳໄລສຸດທິ	%	(25.05)	1.18
ອັດຕາຜົນຕອບແທນຈາກສ່ວນຂອງຜູ້ຖືຫຸ້ນ	%	(21.83)	0.46
ອັດຕາຜົນຕອບແທນຈາກຊັບສິນ	%	12.69	0.41
ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຫຸ້ນ	ເທົ່າ	0.72	0.17
ອັດຕາສ່ວນໜີ້ສິນຕໍ່ຊັບສິນ	ເທົ່າ	0.42	0.15
ກຳໄລຕໍ່ຫຸ້ນ	ກີບ/ຫຸ້ນ	(97)	3

ໃນປີ 2023 ບໍລິສັດມີອັດຕາກຳໄລຂັ້ນຕົ້ນ ໃນອັດຕາສ່ວນ 13.35%, ມີອັດຕາກຳໄລສຸດທິ ໃນອັດຕາສ່ວນ (25.05%), ມີອັດຕາຜົນຕອບແທນຈາກສ່ວນຂອງຜູ້ຖືຫຸ້ນໃນອັດຕາສ່ວນ (21.83%), ມີອັດຕາຜົນຕອບແທນຈາກຊັບສິນໃນອັດຕາສ່ວນ 12.69%, ມີອັດຕາສ່ວນໜີ້ສິນຕໍ່ສ່ວນຜູ້ຖືຫຸ້ນໃນຈຳນວນເງິນ 0.72 ເທົ່າ, ມີອັດຕາສ່ວນໜີ້ສິນຕໍ່ຊັບສິນໃນຈຳນວນເງິນ 0.42 ເທົ່າ ແລະ ມີອັດຕາກຳໄລຕໍ່ຫຸ້ນເທົ່າກັບ (97) ກີບ ຕໍ່ຫຸ້ນ

ພາກທີ III ຂໍ້ມູນກ່ຽວກັບຊັບສິນ ແລະ ໂຄງສ້າງຜູ້ຖືຫຸ້ນ

ຂໍ້ມູນກ່ຽວກັບຊັບສິນ :

ທຶນຈົດທະບຽນທັງໝົດ	50,000,000,000	ກີບ
ຈຳນວນຫຸ້ນທັງໝົດ	100,000,000	ຫຸ້ນ
ຈຳນວນຮຸ້ນທີ່ບໍ່ຝາກກັບ ຕລຊລ	80,000,000	ຫຸ້ນ
ຈຳນວນຮຸ້ນທີ່ຝາກກັບ ຕລຊລ	20,000,000	ຫຸ້ນ




ໂຄງສ້າງຂອງຜູ້ຖືຫຸ້ນ:

ຜູ້ຖືຫຸ້ນທີ່ມີການຖືຄອງຫຸ້ນຕັ້ງແຕ່ 5% ຂຶ້ນໄປ:

1. ບໍລິສັດ ໂອພີຈີ ອິນເຕີເນຊັນແນລ ຈຳກັດ ຖືຄອງຈຳນວນຫຸ້ນ 60,000,000 ຫຸ້ນ ມີສັດສ່ວນຖືຄອງຄິດເປັນ 60% ຂອງຫຸ້ນ ລອທ

2. ທ່ານ ສົມນຶກ ມະນີໂຊດ ຖືຄອງຈຳນວນຫຸ້ນ 12,000,000 ຫຸ້ນ ມີສັດສ່ວນຖືຄອງຄິດເປັນ 12% ຂອງຫຸ້ນ ລອທ

3. ທ່ານ ທະນະເສດ ມາລາວັນໂນ ຖືຄອງຈຳນວນຫຸ້ນ 7,800,000 ຫຸ້ນ ມີສັດສ່ວນຖືຄອງຄິດເປັນ 8% ຂອງຫຸ້ນ ລອທ



ພາກທີ IV ສະພາບໍລິຫານ ແລະ ຄະນະກຳມະການ

ໂຄງສ້າງຂອງສະພາບໍລິຫານ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ປະກອບໄປດ້ວຍສະມາຊິກສະພາ ບໍລິຫານ ຈຳນວນ 3 ທ່ານ ແລະ ສະມາຊິກສະພາບໍລິຫານອິດສະຫຼະ ຈຳນວນ 3 ທ່ານ, ຊຶ່ງມີປະຫວັດຫຍໍ້ ແລະ ຕຳແໜ່ງການບໍລິຫານດັ່ງຕໍ່ໄປນີ້:

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ	: ທ່ານ ອະພິສິດ ຣຸຈິກຽດກຳຈອນ
ວັນ ເດືອນ ປີເກີດ	: 20 ກັນຍາ 1945
ສັນຊາດ	: ໄທ
ພາສາ	: ໄທ/ອັງກິດ
ຕຳແໜ່ງ	: ປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)

ປະຫວັດການສຶກສາ :

ປີ 1969	: ປະລິນຍາຕຣີ, ສາຂາວິສະວະກຳໂຍທາ, ມະຫາວິທະຍາໄລ ຂອນແກ່ນ, ປະເທດໄທ
ປີ 1975	: ມະລິນຍາໂທ, ສາຂາວິສະວະກຳໂຍທາ, ມະຫາວິທະຍາໄລ ລາມາ, ປະເທດສະຫະລັດອາເມລິກາ

ປະຫວັດການເຮັດວຽກ :

ປີ 2008 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ສະຫຍາມໂກລ ບ້ອນເຣົ້າ ຈຳກັດ (ມະຫາຊົນ), ປະເທດໄທ
ປີ 2011 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ຊີອອຍ ຈຳກັດ (ມະຫາຊົນ) , ປະເທດໄທ
ປີ 2014 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ເອເຊັຍໄບໂອແມດ ຈຳກັດ, ປະເທດໄທ
ປີ 2014 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ເອເຊັຍກຣີນ ເອເນີຈີ ຈຳກັດ (ມະຫາຊົນ) , ປະເທດໄທ
ປີ 2008 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ດີ ທີ ຊີ ເອັນເທີໄພຣສ໌, ປະເທດໄທ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ	: ທ່ານ ນາງ ຄຳແພງ ພັດທະດາວົງ
ວັນ ເດືອນ ປີເກີດ	: 27 ກັນຍາ 1979
ສັນຊາດ	: ລາວ
ພາສາ	: ລາວ/ອັງກິດ
ຕຳແໜ່ງ	: ຮອງປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)

ປະຫວັດການສຶກສາ :

ປີ 2002	: ປະລິນຍາຕີ, ສາຂາບໍລິຫານທຸລະກິດ
ປີ 2010	: ປະລິນຍາໂທ, ສາຂາບໍລິຫານທຸລະກິດ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ
ປີ 2019	: ປະລິນຍາເອກ, ສາຂາພັດທະນາອົງກອນ ແລະ ສຳມັດທະນະມະນຸດ, ວິທະຍາໄລບູລະພາ, ປະເທດໄທ

ປະຫວັດການເຮັດວຽກ :

ປີ 1998 – 2001	: ເລຂານຸການ, ບໍລິສັດ ລາວໂຕໂຍຕ້າ
ປີ 2001 – 2005	: ຕິວແທນຂອງ ສປປ ລາວ, ASEAN E-Learning network
ປີ 2007 – 2013	: ຜູ້ປະສານງານໂຄງການ, ສະຖາບັນການເມືອງ ແລະ ການປົກຄອງ
ປີ 2013 – 2016	: ເປັນທີ່ປຶກສາ, TMC- Lao Hydraulic Machinery Manufacturing
ປີ 2010 - ປະຈຸບັນ	: ຮອງປະທານ ກຸ່ມການສຶກສາ ແສງສະຫວັນ
ປີ 2010 - ປະຈຸບັນ	: ຜູ້ປະເມີນອິດສະຫຼະ Education Qualify Insurance, ກະຊວງສຶກສທິການ ແລະ ກິລາ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ : ທ່ານ ເສດ ພັດທະນະມາດ

ວັນ ເດືອນ ປີເກີດ : 16 ພຶດສະພາ 1973

ສັນຊາດ : ໄທ

ພາສາ : ໄທ/ລາວ

ຕຳແໜ່ງ : ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່

ປະຫວັດການສຶກສາ :

ປີ 1991-1993 : ປະກາສະນີຍາບັດວິຊາຊີບຊັ້ນສູງ, ສາຂາອີເລັກໂຕນິກ, ວິທະຍາໄລເທັກນິກປະທຸມທານີ, ປະເທດໄທ

ປີ 1993-1995 : ສາຂາໄຟຟ້າສື່ສານ, ສະຖາບັນເທັກໂນໂລຢີປະທຸມວັນ, ປະເທດໄທ.

ປີ 2011-2013 : ບໍລິຫານທຸລະກິດມະຫາບັນທິດ (ບໍລິຫານທຸລະກິດສຳລັບຜູ້ບໍລິຫານ) ວິທະຍາໄລພານິດຍະສາດ ມະຫາວິທະຍາໄລບູລະພາ ສາຂາໄຟຟ້າສື່ສານ,ປະເທດໄທ.

ປີ 2017-2019 : ປັດຊະຍາດຸດສະດີບັນດິດ (ການພັດທະນາອົງກອນ ແລະ ການຈັດການສະມັດທະນະຂອງມະນຸດ), ມະຫາວິທະຍາໄລບູລະພາ, ປະເທດໄທ.

ປະຫວັດການເຮັດວຽກ:

ປີ 1995 – 2002 : ອາຈານປະຈຳພາກວິຊາອີເລັກໂຕນິກ ສາຂາ ອີເລັກໂຕນິກ ອຸດສາຫະກຳ, ວິທະຍາໄລເຕັກນິກການຈະນະບຸລີ, ປະເທດໄທ

ປີ 2003 – 2004 : ກຳມະການ ແລະ ຜູ້ຈັດການທົ່ວໄປ, ບໍລິສັດ ໂບຣແລມ ເທັກໂນໂລຢີ ຈຳກັດ, ປະເທດໄທ

ປີ 2005 – 2006 : ກຳມະການ ແລະ ຜູ້ຈັດການທົ່ວໄປ, ບໍລິສັດ ຊີແມດ ຄໍປໍເລຊັ່ນ, ຈຳກັດ ປະເທດໄທ

ປີ 2006 - ປະຈຸບັນ : ກຳມະການຜູ້ຈັດການ, ບໍລິສັດ ອອຍປາມກຸບ ຈຳກັດ, ປະເທດໄທ

ປີ 2008 - ປະຈຸບັນ : ກຳມະການຜູ້ຈັດການ, ບໍລິສັດ ໂອພີຈິເທັກ ຈຳກັດ, ປະເທດໄທ

ປີ 2009 - ປະຈຸບັນ : ຜູ້ອຳນວຍການໃຫຍ່, ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ : ທ່ານ ທະນະເສດ ມາລະວັນໂນ

ວັນ ເດືອນ ປີເກີດ : 05 ສິງຫາ 1977

ສັນຊາດ : ໄທ

ພາສາ : ໄທ / ລາວ

ຕຳແໜ່ງ : ສະມາຊິກສະພາບໍລິຫານ

ປີ 2010 - ປະຈຸບັນ :

ປະຫວັດການສຶກສາ/ Education :

ປີ 1999 : ປະລິນຍາຕີ ວິສະວະກອນ ສາຂາ ວິສະວະກອນ ລະບົບຄວບຄຸມ ສະຖາບັນເທັກໂນໂລຢີພະຈອມເກົ້າເຈົ້າ ຄຸນທະຫານລາດກະບັງ

ປະຫວັດການເຮັດວຽກ

ປີ 2000 - ປະຈຸບັນ : ປະກອບທຸລະກິດສ່ວນໂຕ, ອະສັງຫາລິມະຊັບ, ຮ້ານອາຫານ ແລະ ຮັບເໝົາກໍ່ສ້າງ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ	: ທ່ານ ນາງ ດວງສະໄໝ ເລົ່າຝຸງ
ວັນ ເດືອນ ປີເກີດ	: 14 ກໍລະກົດ 1960
ສັນຊາດ	: ລາວ
ພາສາ	: ລາວ/ອັງກິດ/ຣັດເຊຍ
ຕຳແໜ່ງ	: ສະມາຊິກສະພາບໍລິຫານ (ສະມາຊິກອິດສະຫຼະ)

ປະຫວັດການສຶກສາ:

ປີ 1983	: ປະລິນຍາຕີ, ສາຂາວາງແຜນເສດຖະກິດແຫ່ງຊາດ, ອະດີດສະຫະພາບໂຊວຽດ
ປີ 1984	: ປະລິຍາໂທ, ສາຂາວາງແຜນເສດຖະກິດແຫ່ງຊາດ, ອະດີດສະຫະພາບໂຊວຽດ

ປະຫວັດການເຮັດວຽກ:

ປີ 1984 - 1992	: ພະນັກງານວິຊາການ, ກະຊວງເສດຖະກິດ ແລະ ການເງິນ
ປີ 1992 – 2009	: ພະນັກງານວິຊາການ, ທະນາຄານການຄ້າຕ່າງປະເທດລາວ
ປີ 2009 – 2014	: ຮອງຜູ້ຈັດການສາຂາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ປີ 2014 – 2015	: ຮອງຜູ້ຈັດການພະແນກບັນຊີ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ : ທ່ານ ພິງຖານ ພິດຈຳນົງ

ວັນ ເດືອນ ປີເກີດ : 19 ມັງກອນ 1973

ສັນຊາດ : ໄທ

ພາສາ : ໄທ/ລາວ

ຕຳແໜ່ງ : ສະມາຊິກສະພາບໍລິຫານ

ປະຫວັດການສຶກສາ:

ປີ 1993 : ຊັ້ນສູງ, ສາຂາວິສາວະກຳໄຟຟ້າ, ສະຖາບັນ ຊ່າງປະທຸມວັນ, ປະເທດໄທ

ປີ 1995 : ປະລິນຍາຕຣີ, ສາຂາໄຟຟ້າສື່ສານ, ສະຖາບັນຊ່າງປະທຸມ ວັນ, ປະເທດໄທ

ປີ 2011 : ບໍລິຫານທຸລະກິດສຳລັບຜູ້ບໍລິຫານ, ສະຖາບັນນິດ້າ

ປະຫວັດການເຮັດວຽກ / Experience :

ປີ 1996 – 1998 : ວິສະວະກອນ, Telecom Asia PLC.

ປີ 1998 – 2003 : ຜູ້ຈັດການ, Zemasch corp., Ltd.

ປີ 2004 – 2013 : ຜູ້ຈັດການຝ່າຍບໍລິຫານ, Borland technology Ltd.

ປີ 2014 - ປະຈຸບັນ : ສະມາຊິກສະພາບໍລິຫານ, ບໍລິສັດ ໂອພີຈີເທັກ ຈຳກັດ, ປະເທດໄທ

ປີ 2022 - ປະຈຸບັນ : ຜູ້ອຳນວຍການ, ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພາກທີ V ລາຍງານການກວດສອບຂອງບໍລິສັດກວດສອບພາຍນອກ(ພ້ອມເອກະສານຄັດຕິດ)

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

pwc

ເອກະສານລາຍງານການເງິນ

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023



www.pwc.com/la

ລາລະຍານ	ໜ້າ
ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ	1 – 4
ໃບລາຍງານຖານະການເງິນ	5
ໃບລາຍງານຜົນໄດ້ຮັບ	6
ໃບລາຍງານສ່ວນປ່ຽນແປງທຶນ	7
ໃບລາຍງານກະແສເງິນສົດ	8 - 9
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	10 - 25

pwc

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ບໍລິຫານຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນສິ້ນສຸດວັນທີ 31 ທັນວາ 2023 ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ໄດ້ສະແດງສະຖານະທາງການເງິນຂອງບໍລິສັດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

ການກວດສອບຂອງພວກເຮົາມີດັ່ງນີ້:

ເອກະສານລາຍງານການເງິນຂອງບໍລິສັດປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2023
- ໃບລາຍງານຜົນໄດ້ຮັບ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບອິດສະຫຼະ ສຳລັບການກວດສອບ ເອກະສານລາຍງານການເງິນ ໃນບົດລາຍງານພວກເຮົາ.
ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມ ຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມ. ເອກະສານລາຍງານການເງິນໄດ້ສະແດງບົນພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບຈາກຫຼັກການບັນຊີຂອງ ມາດຕະຖານການລາຍງານການເງິນສາກົນ ("IFRS"). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມ IFRS. ທັ້ງ ນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸຍເປີສ (ລາວ) ຈຳກັດຜູ້ດຽວ. ຊັ້ນ 4 ອາຄານອາລີຍັນສ໌, ອາຄານເລກທີ 33 ຖະໜົນລ່ານຊ້າງ ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ. ໂທ: 856 21 222718/9. www.pwc.com/la

pwc

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆ, ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີປັດຈຸບັນ. ພວກເຮົາກຳນົດບັນຫາໜຶ່ງທີ່ສຳຄັນໃນການກວດສອບເຊັ່ນ: ການຮັບຮູ້ລາຍໄດ້. ບັນຫາດັ່ງກ່າວນີ້ໄດ້ມາລວມໃນການກວດສອບເອກະສານລາຍງານການເງິນເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ອີງຕາມນິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນຂໍ້ 2.14 'ນະໂຍບາຍການບັນຊີທີ່ສຳຄັນ ການຮັບຮູ້ລາຍຮັບ' ແລະ ອີງຕາມນິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນຂໍ້ 19 'ລາຍຮັບຈາກການຂາຍ'. ລາຍຮັບຈາກການຂາຍສິນຄ້າ ແມ່ນຮັບຮູ້ ເມື່ອສິນຄ້າໄດ້ຖືກສົ່ງມອບໃຫ້ກັບຜູ້ຊື້. ເຖິງຢ່າງໃດກໍ່ຕາມ, ການຂາຍສິນຄ້າສ່ວນໃຫຍ່ໃນປີແມ່ນຮັບຮູ້ເປັນລາຍຮັບຕາມວັນທີ ທີ່ລູກຄ້າໄດ້ເຊັນໃນໃບສົ່ງເຄື່ອງ ເຊິ່ງຈະນຳໄປສູ່ການພິຈາລະນາຄວາມຄົບຖ້ວນ ແລະ ການບັນທຶກຕາມໄລຍະການຮັບຮູ້ລາຍຮັບ. ພວກເຮົາໄດ້ສຸມໃສ່ການຮັບຮູ້ລາຍຮັບນີ້ທີ່ເປັນການຂາຍສິນຄ້າໃຫ້ລູກຄ້າຕ່າງແຂວງທີ່ມີໄລຍະເວລາໃນການສົ່ງ 3 ຫາ 5 ມື້. ດັ່ງນັ້ນ ມີຄວາມເປັນໄປໄດ້ກ່ຽວກັບຄວາມສ່ຽງທີ່ເອກະສານລາຍງານການເງິນຈະຜິດພາດກ່ຽວກັບລາຍການທີ່ເກີດຂຶ້ນທ້າຍປີ. ນອກຈາກນີ້, ມູນຄ່າ ແລະ ລາຍການເຄື່ອນໄຫວຂອງລາຍຮັບແມ່ນມີມູນຄ່າສູງທີ່ເປັນສາລະສຳຄັນໃນສິ້ນສຸດປີການບັນຊີ.	ພວກເຮົາປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້: • ປະເມີນ ແລະ ທົດສອບ ປະສິດທິພາບໃນການອອກແບບ ແລະ ການດຳເນີນງານຂອງການຮັບຮູ້ລາຍຮັບ ໂດຍສຸມໃສ່ການຄວບຄຸມເລື່ອງເວລາ ແລະ ຄວາມຄົບຖ້ວນຂອງການຂາຍ • ທົດສອບການສົມທຽບຈາກການຄວບຄຸມໃນການເບີກສິນຄ້າອອກສາງ ກັບ ບັນຊີໃຫຍ່ແຍກປະເພດຂອງເລກບັນຊີລາຍຮັບລວມທັງການກວດສອບລາຍການປັບປຸງທຽບໃສ່ກັບເອກະສານທີ່ກ່ຽວຂ້ອງ • ເລືອກລາຍການລາຍຮັບກ່ອນ ແລະ ຫຼັງປີການບັນຊີມາທົດສອບວ່າ ບັນທຶກເໝາະສົມກັບເງື່ອນໄຂທີ່ຢູ່ໃນໃບແຈ້ງໜີ້ ຫຼື ບໍ່ • ທົດສອບລາຍການເຄື່ອນໄຫວຂອງລາຍຮັບສຳລັບສິນຄ້າທີ່ຖືກຂາຍໃນລະຫວ່າງປີການບັນຊີໂດຍມີການສົມທຽບລາຍການເຄື່ອນໄຫວຂອງລາຍຮັບກັບໃບສົ່ງສິນຄ້າທີ່ມີລາຍເຊັນລູກຄ້າ. • ໄດ້ມີການສອບຖາມຜູ້ບໍລິຫານກ່ຽວກັບຄວາມຄົບຖ້ວນ ແລະ ບັນທຶກບັນຊີໃຫ້ຖືກຕ້ອງສຳລັບການຮັບຮູ້ລາຍຮັບ. ຈາກວິທີການກວດສອບ, ພວກເຮົາພົບວ່າການຮັບຮູ້ລາຍຮັບແມ່ນເປັນໄປຕາມນະໂຍບາຍການບັນຊີ ແລະ ຫຼັກຖານທີ່ກວດສອບ.

ຂໍ້ມູນອື່ນ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານການເງິນປະຈຳປີ ແຕ່ບໍ່ໄດ້ລວມຂໍ້ມູນເຂົ້າໃນເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບເອກະສານລາຍງານການເງິນປະຈຳປີ ພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ຄວາມຮັບຜິດຊອບຂອງພວກເຮົາຕໍ່ການກວດສອບເອກະສານລາຍງານການເງິນຄື ການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນທີ່ມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບເອກະສານລາຍງານການເງິນ ຫລື ກັບຄວາມຮູ້ທີ່ໄດ້ມາຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ. ພວກເຮົາຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດສອບຮັບຮູ້.

pwc

ຄວາມຮັບຜິດຊອບຂອງຜູ້ບໍລິຫານ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ແລະ ນຳສະເໜີ ໂດຍສອດຄ່ອງກັບ ຫຼັກການບັນຊີ ດັ່ງ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ບໍລິຫານໄດ້ກຳນົດ ໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ ບໍ່ວ່າເນື່ອງມາຈາກການສໍ້ ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດ ໃນການດຳເນີນງານ ຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວນເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳລັບການດຳເນີນ ງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບ ໄດ້ຊ່ວຍຜູ້ອຳນວຍການ ເບິ່ງແຍງຂັ້ນຕອນໃນການກະກຽມເອກະສານລາຍງານການເງິນ.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍ ປາສະຈາກການສະແດງຂໍ້ ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການ ເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການ ຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະ ສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການ ຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີ ຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກ ການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳ ເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນ ໃນການກວດສອບທີ່ເໝາະສົມກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບ ຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັ້ງ ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.

pwc

- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີຜົນໃຈໃຫ້ເກີດຂໍ້ສົງໄສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງ.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

ຈາກເລື່ອງທີ່ສື່ສານກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາເລື່ອງຕ່າງໆທີ່ເປັນສາລະສຳຄັນ ທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ. ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສວໍເຕີເຮົ້ສຄຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ ພິງພັນ ດຳຣິງພັນອຸດົມ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 18 ມີນາ 2024

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານສະຖານະການເງິນ
ວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ກີບ	2022 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	14.381.978.713	4.619.541.579
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	4	8.889.226.496	10.703.012.890
ເຄື່ອງໃນສາງ, ສຸດທິ	5	1.581.590.036	664.795.109
ວັດສະດຸສະໜອງໂຮງງານ, ສຸດທິ	6	2.668.342.495	3.029.381.916
ຄ່າເບື້ອນຊໍ້າລະຕົ້ນທຶນການປູກເບ້ຍປານເພື່ອຂາຍ	7	554.250.404	1.248.693.549
ຊັບສິນໝຸນວຽນອື່ນໆ		4.150.715.289	1.303.134.447
ລວມຊັບສິນໝຸນວຽນ		**32.226.103.433**	**21.568.559.490**
ຊັບສິນບໍ່ໝຸນວຽນ			
ການລົງທຶນໃນບໍລິສັດໃນເຄືອ	8	240.422.000.000	(-)
ຊັບສິນບັດຄົງທີ່ ມີຕົວຕົນ, ສຸດທິ	9	17.682.934.209	18.522.121.435
ຄ່າເບື້ອນລໍຖ້າຕັດຕົ້ນທຶນການປູກຕົ້ນປານ, ສຸດທິ	10	18.362.758.040	23.522.524.712
ຄ່າເບື້ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນຢີ້ນ້ຳ	11	1.967.158.504	(-)
ລວມຊັບສິນບໍ່ໝຸນວຽນ		**278.434.850.753**	**42.044.646.147**
ລວມຊັບສິນ		**310.660.954.186**	**63.613.205.637**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	12	244.151.457.603	5.136.437.085
ໜີ້ສິນໝຸນວຽນອື່ນໆ	13	19.502.398	496.422.123
ເງິນກູ້ຢືມໄລຍະສັ້ນ	14	2.000.000.000	2.633.416.800
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	15	1.088.782.267	975.453.800
ລວມໜີ້ສິນໝຸນວຽນ		**247.259.742.268**	**9.241.729.808**
ໜີ້ສິນບໍ່ໝຸນວຽນ			
ໜີ້ຕ້ອງສົ່ງຈາກການເຊົ່າຊື້	15	(-)	17.596.119
ໜີ້ສິນບໍ່ໝຸນວຽນອື່ນໆ	16	18.223.424.449	(-)
ລວມໜີ້ສິນບໍ່ໝຸນວຽນ		18.223.424.449	17.596.119
ລວມໜີ້ສິນ		**265.483.166.717**	**9.259.325.927**
ທຶນເຈົ້າຂອງ			
ທຶນຈົດທະບຽນ	17	50.000.000.000	50.000.000.000
ສ່ວນເພີ່ມທຶນ	17	3.269.466.406	3.269.466.406
ກຳໄລ/(ຂາດທຶນ) ສະສົມ			
ຄັງສະສົມຕາມລະບຽບການ	18	932.158.245	932.158.245
ກຳໄລສະສົມລໍຖ້າແບ່ງປັນ		(9.023.837.182)	152.255.059
ລວມທຶນເຈົ້າຂອງ		45.177.787.469	**54.353.879.710**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**310.660.954.186**	**63.613.205.637**

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 18 ມີນາ 2024

ທ່ານ ວັນສະໜັ່ງ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 18 ມີນາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 – 25 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ກີບ	2022 ກີບ
ລາຍຮັບຈາກການຂາຍ	19	38.873.413.574	21.162.968.580
ຕົ້ນທຶນໃນການຂາຍ	20	(33.682.887.363)	(12.736.488.391)
ກຳໄລຂັ້ນຕົ້ນ		**5.190.526.211**	**8.426.480.189**
ລາຍຈ່າຍການຂາຍ ແລະ ບໍລິຫານ		(11.863.630.996)	(8.420.553.552)
ລາຍຮັບອື່ນໆ		1.683.575.508	2.163.506.742
ຂາດທຶນຈາກອັດຕາແລກປ່ຽນ		(3.971.210.998)	(1.337.318.774)
(ຂາດທຶນ)/ກຳໄລ ຈາກການດຳເນີນງານ		**(8.960.740.275)**	**832.114.605**
ລາຍຈ່າຍທາງການເງິນ		(215.351.966)	(357.924.699)
(ຂາດທຶນ)/ກຳໄລ ຈາກການດຳເນີນງານກ່ອນອາກອນກຳໄລ		**(9.176.092.241)**	**474.189.906**
ອາກອນກຳໄລ	21	(-)	(224.270.984)
(ຂາດທຶນ)/ກຳໄລ ສຸດທິສຳລັບປີ		**(9.176.092.241)**	**249.918.922**
(ຂາດທຶນ)/ກຳໄລ ຕໍ່ຮຸ້ນ			
(ຂາດທຶນ)/ກຳໄລ ພື້ນຖານຕໍ່ຮຸ້ນ	22	(91.76)	2.50

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 18 ມີນາ 2024

ທ່ານ ວັນສະເຫຼີມ ສີສຸດຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 18 ມີນາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 25 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານສ່ວນປ່ຽນແປ່ງທຶນ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023

	ປີດ ອະທິບາຍ	ທຶນຈົດທະບຽນ ຖອກແລ້ວ	ສ່ວນເພີ່ມທຶນ	ກຳໄລສະສົມ/(ຂາດທຶນ) ຄ້ຽສະສົມຕາມ ລະບຽບການ	ກຳໄລສະສົມລໍ້ຳ ແປ່ງປັນ	ລວມ
		ກີບ	ກີບ	ກີບ	ກີບ	ກີບ
ຍອດເຫຼືອຍົກມາໃນວັນທີ 1 ມ້ງກອນ 2022		50.000.000.000	3.269.466.406	907.166.353	(72.671.971)	54.103.960.788
ກຳໄລສຳລັບໃນປີ		(-)	(-)	(-)	249.918.922	249.918.922
ຄ້ຽສະສົມຕາມລະບຽບການ	18			24.991.892	(24.991.892)	(-)
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2022		**50.000.000.000**	**3.269.466.406**	**932.158.245**	**152.255.059**	**54.353.879.710**
ຍອດເຫຼືອຍົກມາໃນວັນທີ 1 ມ້ງກອນ 2023		**50.000.000.000**	**3.269.466.406**	**932.158.245**	**152.255.059**	**54.353.879.710**
ຂາດທຶນສຳລັບໃນປີ		(-)	(-)	(-)	(9.176.092.241)	(9.176.092.241)
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2023		**50.000.000.000**	**3.269.466.406**	**932.158.245**	**(9.023.837.182)**	**45.177.787.469**

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 18 ມີນາ 2024

ທ່ານ ວັນສະເຫຼີມ ສີສຸດຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 18 ມີນາ 2024

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 25 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ກີບ	2022 ກີບ
(ຂາດທຶນ)/ກຳໄລກ່ອນເສຍອາກອນ		**(9.176.092.241)**	**474.189.906**
ລາຍການປັບປຸງ:			
ຄ່າຫຼ້ຍຫ້ຽນ	9	2.255.283.839	2.072.621.922
ຄ່າຕັດຖອນ	10	937.425.364	913.137.748
ການສະສາງຂອງເຄື່ອງໃນສາງ ແລະ ວັດສະດຸສະໜອງໂຮງງານ	5,6	7.254.292	7.010.140
ກຳໄລຈາກການສະສາງຂອງຊັບສິນບັດຄົງທີ່ ມີຕົວຕົນ		(-)	(595.702.504)
ການສະສາງຂອງເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ	7	741.876.968	(-)
ຂາດທຶນຈາກອັດຕາແລກປ່ຽນ		1.859.059.453	406.562.566
ລາຍຈ່າຍອັດຕາດອກເບ້ຍ		215.351.966	357.924.699
ໜີ້ສົງໄສຈະເສຍ	4	1.676.229.397	(-)
ການປ່ຽນແປງໃນ ທຶນໝຸນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		137.556.997	672.392.350
ເຄື່ອງໃນສາງ, ສຸດທິ		(923.946.307)	(104.474.488)
ວັດສະດຸສະໜອງໂຮງງານ, ສຸດທິ		360.936.509	(2.673.669.155)
ເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ-ເບ້ຍປາມເພື່ອຂາຍ		(132.731.745)	55.136.937
ຊັບສິນໝຸນວຽນອື່ນໆ		(2.847.580.842)	346.077.255
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		3.746.323.230	2.768.800.975
ໜີ້ສິນໝຸນວຽນອື່ນໆ		70.741.454	609.317.734
ໜີ້ສິນບໍ່ໝຸນວຽນອື່ນໆ	16	18.223.424.449	(-)
ກະແສເງິນສົດຈາກກິດຈະກຳການດຳເນີນງານ		**17.151.112.783**	**5.309.326.085**
ດອກເບ້ຍທີ່ຈ່າຍ		(215.351.966)	(357.924.699)
ອາກອນກຳໄລທີ່ຈ່າຍ		(224.270.984)	(-)
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ, ສຸດທິ		**16.711.489.833**	**4.951.401.386**

ທ່ານ ພົງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 18 ມີນາ 2024

ທ່ານ ວັນສະເຫຼີມ ສີສຸດຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 18 ມີນາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 – 25 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ກີບ	2022 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສົມບັດຄົງທີ່	9	(1.684.832.534)	(783.168.892)
ຈ່າຍຄ່າຕົ້ນທຶນການປູກຕົ້ນປາມ	10	(566.731.330)	(493.269.982)
ຈ່າຍຄ່າຕົ້ນທຶນການປູກຕົ້ນຢີ້ຫ້		(1.967.158.504)	(-)
ຮັບຈາກການສະສາງຂອງຊັບສົມບັດຄົງທີ່ ມີຕົວຕົນ		(-)	627.620.000
ຈ່າຍເງິນການລົງທຶນໃນບໍລິສັດໃນເຄືອ	8	(1.835.611.609)	(-)
ເງິນສົດໃຊ້ສຸດທິ ໃນກິດຈະກຳການລົງທຶນ		**(6.054.333.977)**	**(648.818.874)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການເງິນກູ້ຍືມ	13	7.762.756.000	8.018.700.000
